ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ບທຂ PWT

ກະຊວງໂຍທາທິການ ແລະ ຂົນສົ່ງ

ກົມຂົນສົ່ງ

ເລກທີ .໐385໗. . /ບທຂ.ກຂສ

ນະຄອນຫຼວງວຽງຈັນ, ວັນທີ. ໑໖.ເມສາ.໒໐໒໐

# ແຈ້ງການ

ຮຽນ: ທ່ານ ຫົວໜ້າພະແນກ ໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງວຽງຈັນ ແລະ ບັນດາແຂວງ ທີ່ນັບຖື

ເລື່ອງ: ວິທີການແກ້ໄຂ ການຂົນສົ່ງສິນຄ້າ ຢູ່ນະຄອນຫຼວງວຽງຈັນ ແລະ ບັນດາແຂວງ

- ອີງຕາມ ຄຳສັ່ງ ຂອງນາຍົກລັດຖະມົນຕີ ສະບັບເລກທີ 06/ນຍ, ລົງວັນທີ 29/03/2020 ວ່າດ້ວຍການເພີ່ມທະວີມາດຕະການສະກັດກັ້ນ, ກັນການລະບາດ, ຄວບຄຸມ ແລະ ກຽມຄວາມພ້ອມຮອບດ້ານ ເພື່ອຕ້ານພະຍາດ COVID-19;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການແບ່ງຄວາມຮັບຜິດຊອບພາຍໃນ ຂອງຄະນະສະເພາະກິດເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດ COVID-19 ສະບັບເລກທີ 023/ສພກ, ລົງວັນທີ 06/04/2020;
- ອີງຕາມ ບົດແນະນຳ ຂອງ ກະຊວງ ບທຂ ສະບັບເລກທີ 266/ບທຂ, ລົງວັນທີ 11/04/2020;
- ອີງຕາມ ການຊີ້ນຳ ຂອງທ່ານຫົວໜ້າຫ້ອງການການກະຊວງ ແລະ ອຳນວຍຄວາມສະດວກໃຫ້ແກ່ການຂົນສົ່ງສິນຄ້າພາຍໃນ ແລະ ເຂົ້າ-ອອກ ປະເທດ ດັ່ງວັນທີ 15/04/2020.

ກົມຂົນສົ່ງ, ກະຊວງ ໂຍທາທິການ ແລະ ຂົນສົ່ງ ຂໍແຈ້ງມາຍັງທ່ານຊາບວ່າ: ຜ່ານການຈັດຕັ້ງປະຕິບັດ ບົດແນະນຳ ຂອງ ກະຊວງ ບທຂ ສະບັບເລກທີ 266/ບທຂ, ລົງວັນທີ 11/04/2020 ເຫັນວ່າ ສາມາດແກ້ໄຂບັນຫາລົດຂົນສົ່ງ ສິນຄ້າພາຍໃນ ແລະ ເຂົ້າ-ອອກ ສປປ ລາວ ໄດ້ດີສົມຄວນ, ສາມາດປ້ອງກັນການແຜ່ລະບາດ ຂອງພະຍາດ COVID-19 ແລະ ເຮັດໃຫ້ຜູ້ປະກອບການຂົນສົ່ງ ຂອງ ສປປ ລາວ ໄດ້ຮັບຜົນປະໂຫຍດ ຢ່າງຫຼວງຫຼາຍ, ສາມາດແກ້ໄຂບັນຫາ ລົດຂົນສົ່ງ ຂອງຕ່າງປະເທດ ທີ່ເປົ້າເຂົ້າມາຮັບເອົາສິນຄ້າ, ສ້າງໂອກາດໃນການຊຸກຍູ້ສົ່ງເສີມ, ສ້າງວຽກເຮັດງານທຳ ແລະ ເຕົ້າໂຮມປັບປຸງກຳລັງການຂົນສົ່ງພາຍໃນໃຫ້ເຂັ້ມແຂງຂຶ້ນກ່ວາເກົ່າ. ເຖິງຢ່າງໃດກໍ່ຕາມ, ໃນໄລຍະຜ່ານມາຈົນເຖິງປັດຈຸບັນ ເຫັນວ່າ ກຳລັງລົດຂົນສົ່ງ ແລະ ລົດຂົນສົ່ງວິຊາສະເພາະຈຳນວນໜຶ່ງ ຂອງ ສປປ ລາວ ຍັງຈຳກັດ ແລະ ບໍ່ທັນພຽງພໍກັບຄວາມຮຽກຮ້ອງຕ້ອງການຕົວຈິງ ຈຶ່ງເຮັດ ໃຫ້ມີຜູ້ປະກອບການຂົນສົ່ງ ສະເໜີວິທີການແກ້ໄຂ ໃນການເຊົ່ານຳໃຊ້ ລົດຂົນສົ່ງ ຂອງຕ່າງປະເທດ, ວິທີການຖ່າຍ ແລະ ການສັບປ່ຽນຫົວລາກ-ຫາງລາກ ແຕ່ຕ້ອງນຳໃຊ້ ໃຫ້ສອດຄ່ອງ ແລະ ຖືກຕ້ອງຕາມລະບຽບການ ແລະ ເຕັກນິກ. ດັ່ງນັ້ນ, ເພື່ອສືບຕໍ່ອຳນວຍຄວາມສະດວກ ແກ່ບັນດາຜູ້ປະກອບການຂົນສົ່ງສິນຄ້າພາຍໃນ, ແນໃສ່ ສ້າງຄວາມເຂັ້ມແຂງແກ່ທຸລະກິດ ພາຍໃນ, ກົມຂົນສົ່ງ ຈຶ່ງແຈ້ງໃຫ້ບັນດາພະແນກ ບທຂ ນະຄອນຫຼວງວຽງຈັນ, ບັນດາແຂວງ ແລະ ຜູ້ປະກອບການຂົນສົ່ງ ແລະ ຈັດສົ່ງ ສິນຄ້າ ປະຕິບັດດັ່ງນີ້:

1. ໃຫ້ພະແນກ ບທຂ ນະຄອນຫຼວງວຽງຈັນ ແລະ ບັນດາແຂວງ ຊຸກຍູ້ ຜູ້ປະກອບການຂົນສົ່ງ ແລະ ຈັດສົ່ງ ສິນຄ້າ ຂອງ ສປປ ລາວ ເພື່ອ ລະດົມ ແລະ ເຕົ້າໂຮມ ກຳລັງການຂົນສົ່ງ ເພື່ອໃຫ້ມີຄວາມພ້ອມ ໃນການສະໜັບສະໜູນການຂົນສົ່ງສິນຄ້າ ເຂົ້າ-ອອກ ສປປ ລາວ ໃຫ້ພຽງພໍ ແລະ ມີປະສິດທິພາບ;

2. ໃຫ້ບໍລິສັດຂົນສົ່ງສິນຄ້າ ຂອງ ສປປ ລາວ ສາມາດ ນຳໃຊ້ ລົດຂົນສົ່ງ ຂອງຕ່າງປະເທດ ໂດຍການເຊົ່າເຂົ້າມາ ເພື່ອແກ້ໄຂ ໃນຊ່ວງວິກິດນີ້ ເພື່ອການຂົນສົ່ງສິນຄ້າ ແຕ່ໃຫ້ນຳໃຊ້ ກັບຂັບລົດຄົນລາວ ເທົ່ານັ້ນ ແລະ ໃຫ້ມີການຄ້ຳປະກັນກັບ ກົມພາສີ ໃນການນຳເຂົ້າຊົ່ວຄາວ ຂອງ ລົດບັນທຸກ, ຫາງລາກ ແລະ ຕູ້ຄອນເທັນເນີ ເພື່ອສາມາດຕິດຕາມ ກວດກາໄດ້;

3. ການນຳເຂົ້າລົດຂົນສົ່ງສິນຄ້າ ໃນໄລຍະຮີບດ່ວນນີ້ ແມ່ນສາມາດເຮັດໜັງສືຄ້ຳປະກັນກັບກົມພາສີກ່ອນ ຈຶ່ງດຳເນີນ ເອກະສານຕາມ ຂັ້ນຕອນນຳເຂົ້າ ຢ່າງຖືກຕ້ອງ ຕາມກົດໝາຍ ແລະ ລະບຽບການຂອງ ສປປ ລາວ ເພື່ອລົບລ້າງສັນຍາ ຄ້ຳປະກັນຕາມພາຍຫຼັງ;

4. ໃຫ້ປົກຖ່າຍຕູ້ຄອນເທັນເນີ ຫລື ການສັບປ່ຽນຫົວລາກ - ຫາງລາກ (Trailer Swapping) ເພື່ອມາສົ່ງ ແລະ ຮັບເອົາ ສິນຄ້າ ຢູ່ໃນ ສປປ ລາວ;

5. ບໍລິສັດ ທີ່ຈະມາດຳເນີນການຂົນສົ່ງ, ຈັດສົ່ງ, ປົກຖ່າຍ, ສັບປ່ຽນຫົວລາກ-ຫາງລາກ ເຊົ່າລົດຕ່າງປະເທດ ມາຂົນສົ່ງ ສິນຄ້າ ລະຫວ່າງປະເທດ ແລະ ຜ່ານແດນ ຕ້ອງແມ່ນບໍລິສັດ ທີ່ຂຶ້ນທະບຽນວິສາຫະກິດ ແລະ ໄດ້ຮັບອະນຸຍາດ ດຳເນີນ ທຸລະກິດ ໃນການຂົນສົ່ງ ແລະ ຈັດສົ່ງສິນຄ້າ ຢູ່ ສປປ ລາວ ເທົ່ານັ້ນ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອປະສານກັບພາກສ່ວນກ່ຽວຂ້ອງ ຈັດຕັ້ງປະຕິບັດແຈ້ງການນີ້ໃຫ້ໄດ້ຮັບຜົນດີດ້ວຍ.

**ຫົວໜ້າກົມ**

ປອ. ບູນຕາ ອ່ອນບາວົງ

**ບ່ອນສົ່ງ:**

- ຄະນະສະເພາະກິດ COVID-19 ສູນກາງ — 1 ສະບັບ
- ຄະນະສະເພາະກິດ COVID-19 ນະຄອນຫລວງວຽງຈັນ ແລະ ບັນດາແຂວງ — 1 ສະບັບ
- ດ່ານຊາຍແດນສາກົນທົ່ວປະເທດ — 1 ສະບັບ
- ກົມພາສີ, ກະຊວງການເງິນ — 1 ສະບັບ
- ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ — 1 ສະບັບ
- ສະມາຄົມຜູ້ຂົນສົ່ງ ແລະ ຈັດສົ່ງສິນຄ້າ ລະຫວ່າງປະເທດ ຂອງ ສປປ ລາວ (LITFA) — 1 ສະບັບ